


# ຊົມເຊີຍຜົນສຳເລັດກອງປະຊຸມ ສະຫລຸບຜົນການດຳເນີນທຸລະກິດ ປະຈຳປີ 2025 ແລະ ກຳນົດທິດທາງ ແຜນການປະຈຳປີ 2026

**ນະຄອນຫຼວງວຽງຈັນ, ວັນທີ 6 ກຸມພາ 2026**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ຈັດກອງປະຊຸມສະຫລຸບຜົນການດຳເນີນທຸລະກິດປະຈຳປີ 2025 ແລະ ກຳນົດທິດທາງແຜນການປະຈຳປີ 2026 ທີ່ ໂຮງແຮມ ລາດຊະວົງ, ນະຄອນຫຼວງວຽງຈັນ ໂດຍການເປັນປະທານຂອງ **ທ່ານ ນາງ ສາຍສະໝອນ ຈັນທະຈັກ,** ຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວມະຫາຊົນ ພ້ອມດ້ວຍຄະນະອຳນວຍການ, ບັນດາຄະນະພະແນກ, ສູນ ແລະ ສາຂາທົ່ວລະບົບ ເຂົ້າຮ່ວມຫຼາຍກວ່າ 170 ທ່ານ.

**ຂ່າວໂດຍ:** ຂະແໜງພົວພັນນັກລົງທຶນ & ຮ່ວມມືສາກົນ https://www.bcel.com.la// bcelhqv@bcel.com.la




ຈຸດປະສົງກອງປະຊຸມເພື່ອປະເມີນຜົນການດຳເນີນທຸລະກິດຂອງ ທຄຕລ ຕະຫຼອດໄລຍະ 01 ປີຜ່ານມາ ແລະ ກຳນົດທິດທາງແຜນການໃນຕໍ່ໜ້າ. ພ້ອມນັ້ນ, ຍັງມີການມອບລາງວັນຍ້ອງຍໍໃຫ້ບັນດາສາຂາທີ່ມີຜົນງານການຈັດຕັ້ງປະຕິບັດວຽກງານ KPI ເພື່ອເປັນບ່ອນຢັ້ງຢືນການປະຕິບັດວຽກງານຂອງສາຂາດັ່ງກ່າວ.



**ທ່ານ ນ. ສາຍສະໝອນ ຈັນທະຈັກ, ຜູ້ອຳນວຍການ ທຄຕລ ໄດ້ລາຍງານວ່າ** ການດຳເນີນທຸລະກິດຂອງ ທຄຕລ ພາຍໃນປີ 2025 ມີຫຼາຍດ້ານທີ່ປັບຕົວດີຂຶ້ນ ເປັນຕົ້ນແມ່ນຕົວເລກຖານະການເງິນ, ເງິນຝາກ ແລະ ເງິນກູ້ ມີການເພີ່ມຂຶ້ນ ແລະ ປະຕິບັດໄດ້ລື່ນແຜນການທີ່ກຳນົດໄວ້; ດ້ານຜົນການດຳເນີນງານພວກເຮົາສາມາດມີກຳໄລລື່ນແຜນ ແລະ ມີທ່າກ້າວທີ່ດີທຽບໃສ່ປີຜ່ານມາ (ລາຍລະອຽດຕົວເລກກຳໄລຈະໄດ້ລາຍງານພາຍຫຼັງ ກອງປະຊຸມຜູ້ຖືຮຸ້ນຮັບຮອງ). ທັງໝົດນັ້ນ, ແມ່ນ ໝາກຜົນຂອງການທຸ່ມເທເຫື່ອແຮງ ແລະ ສະຕິປັນຍາ ຂອງພະນັກງານ ທຄຕລ ໝົດທຸກຄົນ ໃນຕະຫຼອດໄລຍະ 1 ປີຜ່ານມາ ຈຶ່ງເຮັດໃຫ້ພວກເຮົາສາມາດຍາດໄດ້ຜົນງານອັນໃຫຍ່ຫຼວງຄືດັ່ງກ່າວ.

ໃນປີ 2026 ທຄຕລ ຈະສຸມໃສ່ການດຳເນີນທຸລະກິດແບບຍືນຍົງ, ປັບປຸງການບໍລິການໃຫ້ດີຂຶ້ນກວ່າເກົ່າ, ສ້າງຄວາມເຊື່ອໝັ້ນໃຫ້ຜູ້ຖືຮຸ້ນ ແລະ ຜູ້ລົງທຶນ ເປັນຕົ້ນແມ່ນຍົກສູງຄຸນນະພາບສິນເຊື່ອໃຫ້ມີປະສິດທິພາບ, ເພີ່ມຄວາມຫຼາກຫຼາຍຂອງຜະລິດຕະພັນ ແລະ ຖືເອົາການບໍລິການລູກຄ້າເປັນສຳຄັນ, ການເຫັນເປັນທັນສະໄໝ ເພື່ອຮັກສາຄວາມເປັນຜູ້ນຳດ້ານ Digital Banking, ສ້າງຄວາມເຂັ້ມແຂງທາງດ້ານການເງິນ, ຮ່ວມມືທຸລະກິດກັບພາກສ່ວນພາຍນອກ ເພື່ອເພີ່ມໂອກາດທາງທຸລະກິດ, ຫຼຸດຜ່ອນດ້ານລາຍຈ່າຍທີ່ບໍ່ຈຳເປັນ. ກອງປະຊຸມໄດ້ດຳເນີນເປັນເວລາ 01 ວັນ ເຕັມ.